# ຜົນສຳເລັດກອງປະຊຸມໃຫຍ່ ຄັ້ງທີ່ VI ຂອງກຳມະບານຮາກຖານ ສາຂາ ທະນາຄານແຫ່ງ ສປປລາວ ພາກເໜືອ ທີ່ ແຂວງອຸດົມໄຊ




ກອງປະຊຸມໃຫ່ຍຄັ້ງທີ່ VI ຂອງກຳມະບານຮາກຖານ ສາຂາ ທະນາຄານແຫ່ງ ສປປ ລາວ ພາກເໜືອ ທີ່ ແຂວງອຸດົມໄຊ ໄດ້ໄຂຂື້ນໃນວັນທີ 4 ກໍລະກົດ 2019 ນີ້ພາຍໃຕ້ການເປັນປະທານຂອງ ສະຫາຍ ທັງຄຳ ກອງຊັບ ຄະນະບໍລິຫານງານສະຫະພັນກຳມະບານແຂວງ, ປະທານກຳມະບານຮາກຖານ ສາຂາທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊ, ໃຫ້ກຽດເຂົ້າຮ່ວມມີ ສະຫາຍ ໄຊພອນ ຖົມປະດິດ ກຳມະການຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ປະທານສະຫະພັນກຳມະບານແຂວງອຸດົມໄຊ, ສະຫາຍ ບຸນໄທ ສຸພັດທອນ ເລຂາຄະນະພັກຮາກຖານ ຫົວໜ້າສາຂາທະນາຄານແຫ່ງ ສປປລາວ ພາກເໜືອ ທີ່ ແຂວງອຸດົມໄຊ, ມີບັນດາແຂກທີ່ຖືກເຊີນຈາກກຳມະບານຮາກຖານທະນາຄານການຄ້າຕ່າງເທດລາວມະຫາຊົນ, ທະນາຄານສົ່ງເສີມກະສິກຳ, ທະນາຄານນະໂຍບາຍ, ທະນາຄານພັດທະນາລາວ, ທະນາຄານລາວຫວຽດ, ສະຖາບັນການເງິນຈຸລະພາກໄຊນິຍົມ, ສະຖາບັນການເງິນຈຸລະພາກພັດທະນາອຸດົມໄຊ ແລະ ກຳມະບານຮາກຖານພະແນກຖະແຫຼງຂ່າວວັດທະນາທຳ ແລະ ທ່ອງທ່ຽວແຂວງອຸດົມໄຊ ພ້ອມດ້ວຍຜູ້ແທນສົມບູນ, ສະມາຊິກກຳມະບານພາຍໃນຮາກຖານເຂົ້າຮ່ວມທັງໝົດ 58 ສະຫາຍ, ຍິງ 26 ສະຫາຍ, ມີຜູ້ແທນສົມບູນ 50 ສະຫາຍ, ຍິງ 24 ສະຫາຍ. ກອງປະຊຸມໄດ້ຮັບຟັງບົດລາຍງານການເມືອງ ທີ່ສະເໜີໂດຍ ສະຫາຍ ທັງຄຳ ກອງຊັບ ເຊິ່ງໄດ້ຕີລາຄາເຖິງສະພາບການຈັດຕັ້ງປະຕິບັດວຽກງານ ກຳມະບານຂອງຮາກຖານສາຂາ ທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊ ໃນໄລຍະ 3 ປີຜ່ານມາ ໂດຍຄະນະຮາກຖານໄດ້ເອົາໃຈໃສ່ຊີ້ນຳ-ນຳພາເຄື່ອນໄຫວວຽກງານກຳມະບານ ໂດຍຕິດພັນກັບວຽກງານວິຊາສະເພາະ ເຊິ່ງໄດ້ພ້ອມກັນຈັດຕັ້ງຜັນຂະຫຍາຍປະຕິບັດມະຕິກອງປະຊຸມໃຫ່ຍຄັ້ງທີ່ V ຂັ້ນຂອງຕົນ ນອກນັ້ນຍັງຄຽງຄູ່ກັບຂໍ້ສະດວກຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ ເຊິ່ງໄດ້ສະແດງອອກໃຫ້ເຫັນວ່າມີບຸກຄົນດີເດັ່ນໄດ້ຮັບການຍ້ອງຍໍຂອງປະທານສະຫະພັນກຳມະບານແຂວງ ຈຳນວນ 24

ສະຫາຍ, ຍິງ 10 ສະຫາຍ ແລະ ໄດ້ຮັບໃບຍ້ອງຍໍຂອງເລຂາຄະນະພັກຮາກຖານ ຈຳນວນ 21 ສະຫາຍ, ຊຶ່ງເປັນຜົນງານທີ່ຍາດມາໄດ້ໃນໄລຍະ 3 ປີແຕ່ປີ (2016-2018).






ກອງປະຊຸມ ສະຫາຍ ນາງ ຄຳຫຼ້າ ສຸລິຍານິນ ຄະນະໜ່ວຍພັກຮາກຖານໄດ້ຜ່ານມາດຖານເງື່ອນໄຂຜູ້ສະໝັກຄັດເລືອກເປັນຄະນະຊຸດໃໝ່ໂດຍມີຜູ້ສະໝັກ 7 ສະຫາຍ, ຍິງ 3 ສະຫາຍ, ເລືອກເອົາ 5 ສະຫາຍ, ກອງປະຊຸມຄົ້ງປະຖົມມະລຶກໄດ້ເຫັນດີເປັນເອກະພາບກັນເລືອກເອົາ ສະຫາຍ ທັງຄຳ ກອງຊັບ ເປັນປະທານກຳມະບານຮາກຖານ ສາຂາທະນາຄານແຫ່ງ ສປປລາວ ພາກເໜືອ ແຂວງອຸດົມໄຊ ຊຸດໃໝ່, ສະຫາຍ ແສງເພັດ ພັນທະວົງ ເປັນຮອງປະທານທັງເປັນປະທານກວດກາ, ສະຫາຍ ນາງ ມະນີພອນ ສີສະຫວັນ ເປັນຮອງປະທານ ແລະ ອີກ 2 ສະຫາຍ ເປັນຄະນະ.

ຕອນທ້າຍກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຂອງ ສະຫາຍ ໄຊພອນ ຖົມປະດິດ ກຳມະການຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ປະທານສະຫະພັນກຳມະບານແຂວງອຸດົມໄຊ ເຊິ່ງສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານທີ່ທາງຄະນະຊຸດເກົ່າຍາດມາໄດ້ໃນໄລຍະ 3 ປີຜ່ານມາ ພ້ອມດຽວກັນນັ້ນກໍ່ໄດ້ຍົກໃຫ້ເຫັນພາລະບົດບາດຄວາມສຳຄັນຂອງກຳມະບານລາວ ແລະ ໃຫ້ທິດຊີ້ນຳເນັ້ນໜັກໃຫ້ຄະນະປະທານກຳມະບານຮາກຖານຊຸດໃໝ່ຈົ່ງເພີ່ມທະວີຄວາມຮັບຜິດຊອບຊີ້ນຳ-ນຳພາ ວຽກງານກຳມະບານໃນໄລຍະໃໝ່ ຂອງສາຂາທະນາຄານແຫ່ງ ສປປລາວ ພາເໜືອ ທີ່ ແຂວງອຸດົມໄຊ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງໃນການຈັດຕັ້ງປະຕິບັດວຽກງານກຳມະບານ ແລະ ເຮັດໜ້າທີ່ເປັນຕົວແທນແຫ່ງການປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງສະມາຊິກກຳມະບານ, ກຳມະກອນ, ຊາວຜູ້ອອກແຮງງານລາວບັນດາເຜົ່າ ໂດຍຕິດພັນກັບວຽກງານວິຊາສະເພາະຂອງຕົນໃຫ້ໜັກແໜ້ນເຂັ້ມແຂງຂຶ້ນເລື້ອຍໆ.

**# ຂ່າວໂດຍ: ທັງຄຳ ກອງຊັບ**

**# ພາບໂດຍ: ພອນໄຊ ສີລາວົງ**